# ບົດຖະແຫຼງຂ່າວ

## ສະຖານທູດອົດສະຕຣາລີ

ນະຄອນຫຼວງວຽງຈັນ

11 ທັນວາ 2014

**ງານລ້ຽງສົ່ງນັກສຶກສາລາວ ຜູ້ທີ່ໄດ້ຮັບທຶນການສຶກສາຈາກອົດສະຕຣາລີ**

ພະນະທ່ານ ເອກອັກຄະລັດຖະທູດ ອົດສະຕຣາລີ ປະຈຳ ສປປ ລາວ ມື້ນີ້ ໄດ້ຈັດງານລ້ຽງສົ່ງ ນັກສຶກສາລາວ ຜູ້ທີ່ໄດ້ຮັບທຶນການສຶກສາ ຂອງ ປະເທດອົດສະຕຣາລີ ທັງ ຊາວໜຸ່ມ ຍິງ ແລະ ຊາຍ ຈຳນວນທັງໝົດ 46 ຄົນ ເພື່ອໄປສຶກສາຕໍ່ ທີ່ອົດສະຕຣາລີ ໃນປີ 2015.

ທ່ານ ວິນລຽມສ໌ ເອກອັກຄະລັດຖະທູດ ອົດສະຕຣາລີ ໄດ້ກ່າວວ່າ ມີຜູ້ໄດ້ຮັບທຶນການສຶກສາ 4 ຄົນ ທີ່ຈະໄດ້ ໄປສຶກສາຕໍ່ລະດັບປະລິນຍາເອກ, ມີ 30 ຄົນ ຈະໄປສຶກສາຕໍ່ລະດັບປະລິນຍາໂທ ແລະ ມີ 12 ຄົນ ຈະ ໄປສຶກສາຕໍ່ລະດັບປະລິນຍາຕີ. ພວກເຂົາ ຄວນຈະຕ້ອງຕັ້ງໃຈຮຽນ ເພື່ອຄວ້າເອົາໂອກາດພິເສດທີ່ໄດ້ຮັບ ດັ່ງ ກ່າວນີ້, ສະນັ້ນ ພວກເຂົາ ຈະສາມາດປະກອບສ່ວນ ເຂົ້າໃນການພັດທະນາດ້ານເສດຖະກິດ ຂອງ ສປປ ລາວ ໃນອະນາຄົດ ໃນເວລາທີ່ພວກເຂົາຮຽນຈົບກັບມາ.

ທ່ານ ວິນລຽມສ໌ ຍັງໄດ້ກ່າວອີກວ່າ “ນີ້ເປັນໂອກາດອັນດີໃຫ້ແກ່ ຜູ້ທີ່ຈະເປັນຜູ້ນຳຂອງສປປ ລາວ ໃນລຸ້ນຕໍ່ໄປ ເພື່ອສ້າງຄວາມອາດສາມາດ, ຄວາມຮູ້ ແລະ ສ້າງເຄືອຄ່າຍໃນຂົງເຂດທີ່ເປັນໃຈກາງ ໃຫ້ແກ່ອະນາຄົດຂອງ ຊາດ, ເຊັ່ນ ການສຶກສາ, ການຄຸ້ມຄອງຊັບພະຍາກອນທຳມະຊາດ, ການຄຸ້ມຄອງບໍລິຫານລັດ ແລະ ການຄ້າ”.

ທ່ານ ເອກອັກຄະລັດຖະທູດ ຍັງໄດ້ກ່າວເພີ່ມວ່າ ຜູ້ທີ່ໄດ້ຮັບທຶນ ການສຶກສາ ແຕ່ລະຄົນ ມີປະຫວັດການຮຽນທີ່ ດີເລີດ, ແລະ ກໍ່ໄດ້ຜ່ານຂະບວນການ ຄັດເລືອກທຶນ ທີ່ເຄັ່ງຄັດ ກ່ອນຈະໄດ້ຖືກຄັດເລືອກໃຫ້ເປັນຜູ້ໄດ້ຮັບ ທຶນ ການສຶກສາ ດັ່ງກ່າວ. ຜູ້ໄດ້ຮັບ ທຶນການສຶກສາ ຂອງອົດສະຕຣາລີ ທັງ 46 ຄົນ ໄດ້ມາຈາກ ຫຼາຍພາກສ່ວນ, ເຊິ່ງເປັນຕົວແທນທີ່ມາຈາກ 8 ແຂວງ.

ທຶນການສຶກສາ ຂອງອົດສະຕຣາລີ ເປັນທຶນການສຶກສາ ລະດັບສາກົນ ທີ່ມີຊື່ສຽງ ເຊິ່ງ ລັດຖະບານ ອົດ ສະຕຣາລີ ເປັນຜູ້ໃຫ້ທຶນເພື່ອໃຫ້ການຊ່ວຍເຫຼືອ ທີ່ຈຳເປັນ ດ້ານການພັດທະນາ ໃນໄລຍະຍາວ ຂອງ ບັນດາ ປະເທດຄູ່ຮ່ວມພັດທະນາຂອງ ອົດສະຕຣາລີ.

ທຶນການສຶກສາ ຂອງອົດສະຕຣາລີ ຖືວ່າເປັນໃຈກາງ ຂອງ ໂຄງການຮ່ວມມື ດ້ານ ການພັດທະນາປະຈຳປີ ຂອງ ອົດສະຕຣາລີ ທີ່ມີມູນຄ່າ 60 ລ້ານ ໂດລາອົດສະຕຣາລີ ໃຫ້ແກ່ ສປປ ລາວ, ໂດຍສຸມໃສ່ ການສຶກສາ,

ການພັດທະນາຊັບພະຍາກອນມະນຸດ, ການພັດທະນາຊົນນະບົດ, ການເກັບກູ້ລະເບີດທີ່ບໍ່ທັນແຕກ, ການຄ້າ ແລະ ການລົງທຶນ, ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ.

ໃນແຕ່ລະປີ ລັດຖະບານ ອົດສະຕຣາລີ ໃຫ້ທຶນການສຶກສາ ແກ່ພົນລະເມືອງລາວ 50 ທຶນ ເພື່ອໄປສຶກສາລະດັບ ປະລິນຍາຕີ ຫຼື ປະລິນຍາໂທ, ຫຼື ດ້ານວິຊາສະເພາະ ແລະ ຫຼັກສູດການຝຶກອົບຮົມວິຊາຊີບຕ່າງໆ ຢູ່ ອົດສະຕຣາລີ.

ຕັ້ງແຕ່ລັດຖະບານ ອົດສະຕຣາລີ ເລີ່ມຕົ້ນ ໃຫ້ທຶນການສຶກສາ ຢູ່ ສປປ ລາວ, ມີຜູ້ໄດ້ຮັບທຶນການສຶກສາ ຫຼາຍກ່ວາ 1,100  ຄົນ ທີ່ໄດ້ ຮຽນຈົບການສຶກສາ ຈາກ ອົດສະຕຣາລີ ແລະ ໄດ້ກັບມາໝູນໃຊ້ຄວາມຮູ້ໃໝ່ໆທີ່ໄດ້ຮຽນມາ ຢູ່ ສປປ ລາວ.

ຂໍ້ມູນເພີ່ມຕື່ມກ່ຽວກັບ ທຶນການສຶກສາ ຂອງອົດສະຕຣາລີ ສາມາດເບິ່ງເພີ່ມໄດ້ທີ່
www.australiaawards.gov.au.

*ສອບຖາມຂໍ້ມູນເພີ່ມຕື່ມທີ່: ມິ່ງງາຄຳ ປັນຍາສັກ, ຜູ້ຮັບຜິດຊອບ ຊື່ມວນຊົນ ແລະ ຂ່າວສານ, ສະຖານທູດອົດສະຕຣາລີ,*
*ໂທ:  021 353 800 ຕໍ່ 125, ມືຖື 020 2223 8299*

40th ANNIVERSARY
asean-australia